ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກສຶກສາທິການ ແລະ ກິລາ

ເລກທີ 4221 /ສກນວ.

ວັນທີ 02/10/2024.

# ຂໍ້ຕົກລົງ

## ວ່າດ້ວຍ ການແຕ່ງຕັ້ງຄະນະກໍາມະການຊຸກຍູ້ ວຽກງານວິທະຍາສາດ ແລະ ນະວະຕະກໍາ ພາຍໃນຂະແໜງສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ

- ອີງຕາມ ມະຕິ ຂອງກົມການເມືອງສູນກາງພັກ ວ່າດ້ວຍການພັດທະນານະຄອນຫຼວງວຽງຈັນໃນໄລຍະໃໝ່ ສະບັບເລກທີ 107/ກມສພ, ລົງວັນທີ 30 ເມສາ 2020;
- ອີງຕາມ ມາດຕາ 1 ພາກທີ I, ມາດຕາ 8 ໝວດທີ1 ພາກທີ II, ມາດຕາ 15, 16, 17 ໝວດທີ2, ມາດຕາ 30, ມາດຕາ 34 ໝວດທີ1 ພາກທີ IV ແລະ ມາດຕາ 37, 38, 39, 40 ພາທີ V ຂອງກົດໝາຍ ວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ສະບັບປັບປຸງ) ເລກທີ 26/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ມາດຕາ 8, 9, 10 ພາກທີ II ການນໍາໃຊ້ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ແລະ ມາດຕາ 16, 17, 18, 19, 20, 21, 22, 23 ໝວດທີ 1 ການພັດທະນາເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ພາກທີ III ຂອງກົດໝາຍ ວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເລກທີ 02/ສພຊ, ລົງວັນທີ 07 ພະຈິກ2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ, ສະບັບເລກທີ 145/ຈນວ, ລົງວັນທີ 02 ກຸມພາ 2023;
- ອີງຕາມ ການຄົ້ນຄ້ວາ ແລະ ນໍາສະເໜີ ຂອງຂະແໜງວິທະຍາສາດ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.

### ຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຕົກລົງ:

**ມາດຕາ 01:** ແຕ່ງຕັ້ງຄະນະຊີ້ນໍາລວມ:

1. ທ່ານ ສົມພອນ ສອນດາລາ ຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຫົວໜ້າ
2. ທ່ານ ສີທົນ ດາວພະສິດ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຮອງ
3. ທ່ານ ບຸນທັນ ແສງມະນີ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຄະນະ
4. ທ່ານ ນາງ ລີປ່າເອ້ຍ ລີບົວປາວ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຄະນະ
5. ທ່ານ ຂັນໄຊ ແສງສຸລີ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຄະນະ
6. ທ່ານ ແສງອາລຸນ ວົງພູທອນ ຜອ.ວິທະຍາໄລເຕັກນິກວິຊາຊີບມິດຕະພາບ ວຽງຈັນ-ຮ່າໂນ້ຍ ເປັນຄະນະ
7. ທ່ານ ທອງພັນ ອຸໄລທອນ ຜອ.ໂຮງຮຽນ ມສ.ວຽງຈັນ ເປັນຄະນະ
8. ທ່ານ ພອນປະເສີດ ເສດຖາທິລາດ ຜອ.ໂຮງຮຽນ ມສ.ມິດຕະພາບ ລາວ-ຫວຽດນາມ ເປັນຄະນະ
9. ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ 9 ເມືອງ ເປັນຄະນະ
10. ທ່ານ ບຸນຕີ ສິດທິນິນທອງ ປະທານສະມາຄົມໂຮງຮຽນພາກເອກະຊົນນະຄອນຫຼວງວຽງຈັນ ເປັນຄະນະ

➢ ສິດ ແລະ ໜ້າທີ່ຂອງຄະນະຊີ້ນໍາລວມ ມີດັ່ງນີ້:

1) ຮຽກປະຊຸມ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະສະຫາຍຕາມພາລະບົດບາດຢ່າງຈະແຈ້ງ;

2) ໃຫ້ທິດຊີ້ນຳ ໃນການຂຶ້ນແຜນງົບປະມານ ແລະ ການຈັດຕັ້ງປະຕິບັດວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງຢ່າງກົມກຽວ;

3) ນຳພາ-ຊີ້ນຳຢ່າງໃກ້ຊິດ ກັບຂະແໜງການ ແລະ ໜ່ວຍງານທີ່ກ່ຽວຂ້ອງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ ແຕ່ລະຂັ້ນ ໃຫ້ເປັນຮູບປະທຳ ແລະ ມີຜົນສຳເລັດຕາມແຜນການທີ່ວາງໄວ້;

4) ຊີ້ນຳໃນການສະຫຼຸບ, ຖອດຖອນບົດຮຽນ ແລະ ວາງທິດທາງແຜນການ, ຄາດໝາຍໃນຕໍ່ໜ້າ ເພື່ອເຮັດໃຫ້ວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ ໄດ້ຖືກນຳໃຊ້ ແລະ ສົ່ງເສີມຢ່າງຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມໃນປັດຈຸບັນ;

**ມາດຕາ 02:** ແຕ່ງຕັ້ງຄະນະກຳມະການຊຸກຍູ້ວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ຂອງຂະແໜງສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ.

1. ທ່ານ ລຳພັນ ອຸ່ນມະໂນ ຫົວໜ້າຂະແໜງວິທະຍາສາດ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ເປັນຫົວໜ້າ
2. ທ່ານ ນາງ ໄພເລາະ ສັງທອງ ຫົວໜ້າຂະແໜງການສຶກສາກ່ອນໄວຮຽນ ເປັນຮອງ
3. ທ່ານ ບຸນນຳ ສຸທຳມະວົງ ຮອງຫົວໜ້າຂະແໜງສາມັນສຶກສາ ເປັນຮອງ
4. ທ່ານ ຈັນທະຄານ ລັດຕະນາ ຮອງຫົວໜ້າຫ້ອງການ ສກມ ຈັນທະບູລີ ເປັນຮອງ
5. ທ່ານ ສິນໄຊ ສຸທຳມະວົງ ຮອງຫົວໜ້າຫ້ອງການ ສກມ ສີໂຄດຕະບອງ ເປັນຮອງ
6. ທ່ານ ສົມສະໜິດ ໄຊຊະນະວົງ ຮອງຫົວໜ້າຫ້ອງການ ສກມ ໄຊເສດຖາ ເປັນຮອງ
7. ທ່ານ ນາງ ເສົາວະລີ ຈິນດາວົງ ຮອງຫົວໜ້າຫ້ອງການ ສກມ ສີສັດຕະນາກ ເປັນຮອງ
8. ທ່ານ ສຸວັນນີ ເພັງເມືອງຄຸນ ຮອງຫົວໜ້າຫ້ອງການ ສກມ ນາຊາຍທອງ ເປັນຮອງ
9. ທ່ານ ຄຳປຸ່ ບຸນເຮືອງ ຮອງຫົວໜ້າຫ້ອງການ ສກມ ໄຊທານີ ເປັນຮອງ
10. ທ່ານ ນາງ ແກ້ວມະນີ ມາລາທອງ ຮອງຫົວໜ້າຫ້ອງການ ຫາດຊາຍຟອງ ເປັນຮອງ
11. ທ່ານ ບຸດດາ ສຸມິນທາ ຮອງຫົວໜ້າຫ້ອງການ ສກມ ສັງທອງ ເປັນຮອງ
12. ທ່ານ ຄຳປານ ຂຸນທະວົງ ຮອງຫົວໜ້າຫ້ອງການ ສກມ ປາກງື່ມ ເປັນຮອງ
13. ທ່ານ ປະທານສະມາຄົມໂຮງຮຽນພາກເອກະຊົນ ຂັ້ນເມືອງ 9 ເມືອງ ເປັນຮອງ
14. ທ່ານ ທັດສະດີ ຈັນທະວົງ ຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຄະນະ
15. ທ່ານ ສີສຸນທອນ ດຳຣົງ ຫົວໜ້າຂະແໜງກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ເປັນຄະນະ
16. ທ່ານ ທົງແກ້ວ ທຳມະວົງ ຫົວໜ້າຂະແໜງກິລາ-ກາຍຍະກຳ ເປັນຄະນະ
17. ທ່ານ ນາງ ທອງໃບ ພັນໂນລາດ ຫົວໜ້າຂະແໜງພັດທະນາຄູ ເປັນຄະນະ
18. ທ່ານ ລັດສະນີ ສຸກສຳເລີງ ຫົວໜ້າຂະແໜງສະຖິຕິ,ແຜນການ ແລະ ພົວພັນຕ່າງປະເທດ ເປັນຄະນະ
19. ທ່ານ ທອງຂັນ ສີລີໂພຄຳ ຫົວໜ້າຂະແໜງສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ເປັນຄະນະ
20. ທ່ານ ສົມນຶກ ພົມມະສາດ ຫົວໜ້າຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ
21. ທ່ານ ປະສິດ ໄມໂນລາດ ຫົວໜ້າສູນສຶກສານິເທດນະຄອນຫຼວງວຽງຈັນ ເປັນຄະນະ
22. ທ່ານ ຜູ້ອຳນວຍການໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍ ທັງພາລັດ ແລະ ເອກະຊົນ ພາຍໃນນະຄອນຫຼວງວຽງຈັນ ເປັນຄະນະ
23. ທ່ານ ຄະນະພັດທະນາການສຶກສາຂັ້ນບ້ານ ເປັນຄະນະ
24. ທ່ານ ປະທານສະມາຄົມສະມາຄົມ ພໍ່-ແມ່ຜູ້ປົກຄອງນັກຮຽນ-ນັກສຶກສາແຕ່ລະຂັ້ນ ເປັນຄະນະ

➢ ສິດ ແລະ ໜ້າທີ່ຂອງຄະນະກຳມະການຊຸກຍູ້ວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ ມີດັ່ງນີ້:

1) ເຜີຍແຜ່ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້, ເຂົ້າໃຈ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບບັນດານິຕິກຳ ແລະ ລະບຽບການທີ່ກຳນົດໄວ້ໃນແຕ່ລະໄລຍະ;
2) ເກັບກຳຕົວເລກສະຖິຕິ, ເກັບກຳສະພາບ, ບັນຫາ ແລະ ສິ່ງທ້າທ້າຍກ່ຽວກັບວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ ເພື່ອລາຍງານໃຫ້ຄະນະຊີ້ນຳລວມ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບຢ່າງທັນເວລາ ແລະ ຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດໃຫ້ທັນກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ;
3) ຊຸກຍູ້, ສົ່ງເສີມ ແລະ ແນະແນວ ໃຫ້ແກ່ຜູ້ບໍລິຫານໂຮງຮຽນ, ຄູ, ນັກຮຽນ, ຜູ້ປົກຄອງນັກຮຽນ ແລະ ມວນຊົນ ເຂົ້າໃຈຢ່າງເລິກເຊິ່ງ ແລະ ມີສ່ວນຮ່ວມກ່ຽວກັບການຈັດຕັ້ງປະຕິບັດວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ຕາມນິຕິກຳຂອງຂັ້ນເທິງວາງອອກແຕ່ລະໄລຍະ;
4) ຄົ້ນຄວ້າ, ສັງລວມ ແລະ ຄຸ້ມຄອງ ເປົ້າໝາຍການສ້າງນັກວິທະຍາສາດ, ນັກປະດິດ ແລະ ເຄື່ອງມືເຕັກໂນໂລຊີ, ນະວັດຕະກຳໃໝ່ ແລະ ສິ່ງປະດິດໃໝ່ ເພື່ອເປັນຊັບສິນທາງປັນຍາ;
5) ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານດ້ານວິທະຍາສາດ ແລະ ນະວັດຕະກຳໃໝ່ທີ່ມີຜົນປະໂຫຍດອອກສູ່ມວນຊົນໄດ້ຮັບຊາບຢ່າງກວ້າງຂວາງ;
6) ສະຫຼຸບ, ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ແລ້ວລາຍງານໃຫ້ຄະນະຊີ້ນຳລວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຂໍທິດຊີ້ນຳ.

**ມາດຕາ 03:** ແຕ່ງຕັ້ງຄະນະກອງເລຂາເກັບກຳສະຖິຕິ, ຄົ້ນຄວ້າ ແລະ ສັງລວມ

| | | | |
|---|---|---|---|
| 1. | ທ່ານ ພອນປະເສີດ ອວນສະຫວັນ | ວິຊາການຂະແໜງວິທະຍາສາດ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ | ເປັນຫົວໜ້າ |
| 2. | ທ່ານ ນ ສຸປານີ ດາລາລັດສະໝີ | ວິຊາການຂະແໜງການສຶກສາກ່ອນໄວຮຽນ | ເປັນຮອງ |
| 3. | ທ່ານ ອຳນາດ ສຸພິດາ | ວິຊາການຂະແໜງສາມັນສຶກສາ | ເປັນຮອງ |
| 4. | ທ່ານ ພຸດທະສອນ ຊຸນໄຊ | ຮອງຫົວໜ້າໜ່ວຍງານ ສກມ ເມືອງຈັນທະບູລີ | ເປັນຄະນະ |
| 5. | ທ່ານ ແສງຈັນ ສະຫວັດດີ | ຫົວໜ້າໜ່ວຍງານ ສກມ ເມືອງສີໂຄດຕະບອງ | ເປັນຄະນະ |
| 6. | ທ່ານ ຄຳແຫງ ແກ້ວບຸນເຮືອງ | ຫົວໜ້າໜ່ວຍງານ ສກມ ເມືອງໄຊເສດຖາ | ເປັນຄະນະ |
| 7. | ທ່ານ ສຸກນີລັນ ນາມວົງຍິດ | ວິຊາການ ສກມ ເມືອງສີສັດຕະນາກ | ເປັນຄະນະ |
| 8. | ທ່ານ ອານຸສິນ ບຸນນະລໍ | ວິຊາການ ສກມ ເມືອງນາຊາຍທອງ | ເປັນຄະນະ |
| 9. | ທ່ານ ປະສິດ ເຜັດສີສຸກ | ວິຊາການ ສກມ ເມືອງໄຊທານີ | ເປັນຄະນະ |
| 10. | ທ່ານ ສຸກສັນ ໄຊທິງເດດ | ວິຊາການ ສກມ ເມືອງຫາດຊາຍຟອງ | ເປັນຄະນະ |
| 11. | ທ່ານ ໄມ ແສງດາລາ | ຫົວໜ້າໜ່ວຍງານ ສກມ ເມືອງສັງທອງ | ເປັນຄະນະ |
| 12. | ທ່ານ ນ້ອຍ ແກ້ວກົງເມືອງ | ວິຊາການ ສກມ ເມືອງປາກງື່ມ | ເປັນຄະນະ |
| 13. | ທ່ານ ຫົວໜ້າໜ່ວຍງານວິຊາການຂອງໂຮງຮຽນ ພາກລັດ ແລະ ເອກະຊົນ | | ເປັນຄະນະ |

➢ ສິດ ແລະ ໜ້າທີ່ຂອງ ກອງເລຂາ ເກັບກຳສະຖິຕິ, ຄົ້ນຄວ້າ ແລະ ສັງລວມ ມີດັ່ງນີ້:

1) ເກັບກຳຕົວເລກສະຖິຕິ ກ່ຽວກັບວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ ຂອງແຕ່ລະທ້ອງຖິ່ນໃຫ້ລະອຽດຈະແຈ້ງ, ສາມາດນຳມາວິເຄາະ, ວິໄຈ ແລະ ນຳໄປຈັດຕັ້ງປະຕິບັດໄດ້;
2) ຄົ້ນຄວ້າດ້ານນິຕິກຳ, ລະບຽບການຄຸ້ມຄອງ ແລະ ຮູບແບບໃນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບຄວາມເປັນຈິງແຕ່ລະໄລຍະ;

3) ເກັບກຳ, ສັງລວມ ບັນດາຂໍ້ມູນທີ່ສຳຄັນ ແລ້ວລາຍງານໃຫ້ຄະນະກຳມະການຊຸກຍູ້ວຽກງານວິທະຍາສາດ ແລະ ນະວັດຕະກຳໃໝ່ ເພື່ອຂໍທິດຊີ້ນຳເປັນປົກກະຕິ;

4) ສົ່ງຕົວເລກສະຖິຕິໃຫ້ກອງເລຂາຕາມການແບ່ງຂັ້ນຄຸ້ມຄອງ ເຊັ່ນ: ກອງເລຂາຂັ້ນໂຮງຮຽນສົ່ງໃຫ້ຂັ້ນຫ້ອງການ ສຶກສາທິການ ແລະ ກິລາ ເມືອງເກັບກຳສັງລວມ, ຂັ້ນຫ້ອງການສຶກສາທິການ ແລະ ກິລາ ເມືອງສົ່ງໃຫ້ກອງເລຂາຂັ້ນພະແນກສັງລວມ ແລະ ຂັ້ນພະແນກສຶກສາທິການ ແລະ ກິລາ ເກັບກຳສັງລວມແລ້ວລາຍງານໃຫ້ຄະນະຊຸກຍູ້, ຄະນະຊີ້ນຳລວມ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມລຳດັບ ເປັນປະຈຳໄຕມາດ ໃນລະຫວ່າງວັນທີ 20-25 ຂອງເດືອນທີ 3 ທຸກໆໄຕມາດ.

**ມາດຕາ 04:** ບັນດາທ່ານທີ່ຖືກແຕ່ງຕັ້ງໃນມາດຕາ 01, 02, 03 ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 05:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກ**

ກະຊວງສຶກສາທິການ ແລະ ກິລາ ພະແນກ ສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ

**ສົມພອນ ສອນດາລາ**